ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
***********000************

ອົງການໄອຍະການປະຊາຊົນສູງສຸດ ເລກທີ 011 /ອອປສ

ນະຄອນຫຼວງວຽງຈັນ, ລົງວັນທີ 6 / 8 /2013

# ຄຳແນະນຳ
# ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

**ເຖິງ: ຫົວໜ້າອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານໃນຂອບເຂດທົ່ວປະເທດ**

**ເລື່ອງ: ການສືບສວນ-ສອບຖາມ ແລະ ການແຍກສຳນວນຄະດີເດັກ**

- ອີງຕາມມາດຕາ 10, 13 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009
- ອີງຕາມມາດຕາ109 ແລະ 117 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2012
- ອີງຕາມມາດຕາ 59 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນໃຫ້ເປັນໄປຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງຕາມກົດໝາຍ ແລະ ເພື່ອຮັບປະກັນຄວາມຍຸຕິທຳທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກໃນການດຳເນີນຄະດີອາຍາ ໃຫ້ຖືກຕ້ອງຕາມຂັ້ນຕອນກົດໝາຍ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດຈຶ່ງມີຄຳແນະນຳໃຫ້ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານໃນທົ່ວປະເທດປະຕິບັດດັ່ງນີ້:

## 1. ການສືບສວນ-ສອບຖາມເດັກ

ໃນການເອົາຄຳໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດ ປີນັ້ນ ຕ້ອງມີການເຂົ້າຮ່ວມຂອງພໍ່ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ. (ປະຕິບັດຕາມມາດຕາ 117 ຂອງ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ປີ 2012, ມາດຕາ 59 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ).

ໃນກໍລະນີທີ່ພໍ່ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງເດັກກະທຳຜິດຫາກຢູ່ໄກບໍ່ສາມາດມາເຂົ້າຮ່ວມໃນການສືບສວນ-ສອບຖາມເດັກ ຫຼື ເອົາຄຳໃຫ້ການເດັກໄດ້ໃນທັນໃດ ຕາມທີ່ກຳນົດໄວ້ໃນມາດຕາ 116 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2012 ແລະ ມາດຕາ 59 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແມ່ນໃຫ້ເຊີນເອົາທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຫຼື ຜູ້ຕາງໜ້າໂຮງຮຽນ, ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງສັງຄົມທີ່ຢູ່ໃກ້ຄຽງກັບບ່ອນດຳເນີນຄະດີນັ້ນ ເຂົ້າຮ່ວມໃນເວລາເອົາຄຳໃຫ້ການເດັກກ່ອນ.

ໃນກໍລະນີທີ່ມີສຳນວນຄະດີເດັກຢູ່ອົງການໄອຍະການ ແຕ່ບໍ່ໄດ້ມີການເຂົ້າຮ່ວມຂອງພໍ່ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການ ສືບສວນ-ສອບຖາມເດັກນັ້ນແມ່ນໃຫ້ຫົວໜ້າອົງການໄອຍະການເຊີນເອົາພໍ່ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນມາຮັບຊາບຕໍ່ຄຳໃຫ້ການຂອງເດັກ ຫຼື ຈະສົ່ງສຳນວນຄະດີດັ່ງກ່າວ ຄືນໃຫ້ເຈົ້າໜ້າທີ່ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງເປັນຜູ້ເຊີນມາຮັບຊາບກໍໄດ້.

## 2. ການເກັບກຳຂໍ້ມູນຫຼັກຖານໃນການດຳເນີນຄະດີເດັກ

ໃນການດຳເນີນຄະດີອາຍາຕໍ່ເດັກກະທຳຜິດນັ້ນ ໃຫ້ເອົາໃຈໃສ່ໃນການປະກອບຂໍ້ມູນຫຼັກຖານຢັ້ງຢືນເຖິງກະສຽນອາຍຸທາງອາຍາຂອງເດັກເຊັ່ນ: ໃບຢັ້ງຢືນການເກີດ, ທະບຽນສຳມະໂນຄົວ, ບັດປະຈຳຕົວ ຫຼື ບັນດາຫຼັກຖານເອກະສານອື່ນໆ ທີ່ຢັ້ງຢືນຄວາມຖືກຕ້ອງອາຍຸຂອງເດັກ.

## 3. ການແຍກສຳນວນຄະດີເດັກກະທຳຜິດຮ່ວມກັບຜູ້ໃຫຍ່

ອີງຕາມມາດຕາ 109 ຂໍ້ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ໄດ້ກຳນົດໄວ້ວ່າ: ການສືບສວນ-ສອບສວນຄະດີອາຍາສາມາດແຍກໄດ້ໃນກໍລະນີການກະທຳຜິດຂອງເດັກອາຍຸບໍ່ເຖິງ 18 ປີ ຮ່ວມກັບຜູ້ໃຫ່ຍ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດມີຄວາມຖືກຕ້ອງ, ເປັນເອກະພາບກັນໃຫ້ປະຕິບັດດັ່ງນີ້:

1. ໃນກໍລະນີທີ່ເຈົ້າໜ້າທີ່ອົງການສືບສວນ-ສອບສວນ ຫາກໄດ້ດຳເນີນຄະດີຕໍ່ເດັກບໍ່ເຖິງ 18ປີ ທີ່ກະທຳຜິດຮ່ວມກັບຜູ້ໃຫ່ຍ ໃຫ້ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ, ເຂດ ແລະ ຫົວໜ້າອົງການໄອຍະການທະຫານ ແນະນຳໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງດຳເນີນການສືບສວນ-ສອບຖາມ ເດັກຜູ້ທີ່ກະທຳຜິດນັ້ນໂດຍໃຫ້ມີການແຍກການສືບສວນ-ສອບຖາມ ການປະກອບຂໍ້ມູນຫຼັກຖານ ແລະ ປະກອບສຳນວນຄະດີໃຫ້ເປັນສຳນວນໜຶ່ງຕ່າງຫາກ. ພາຍຫຼັງສຳເລັດການສືບສວນ-ສອບຖາມ ກໍໃຫ້ສະຫຼຸບປະກອບສຳນວນຄະດີຂອງເດັກກະທຳຜິດນັ້ນໃຫ້ແກ່ອົງການໄອຍະການ.